ມີການທາຣຸນໃນຫລາຍຮູບແບບ.
ການທາຣຸນທາງຮ່າງກາຍ,
ໃນເມື່ອມີຄົນອື່ນທຳຮ້າຍຮ່າງກາຍຂອງທ່ານ.
ມັນອາດເປັນຍ້ອນຄຳເວົ້າ ຫລື
ເປັນການກະທົບກະເທືອນທາງຈິດໃຈ- ການຄຸກຄາມ
ແລະຄຳເວົ້າທີ່ຮຸນແຮງ ກໍຖືວ່າເປັນທາຣຸນເຊັ່ນດຽວກັນ..

ບໍ່ມີຜູ້ໃດ ບໍ່ວ່າແຕ່ສະມາຊິກ ໃນຄອບຄົວຄົນໃດ ກໍບໍ່ມີສິດໃຊ້ຄວາມຮຸນແຮງ ຫລື ທາຣຸນຜູ້ອື່ນ.

ຕໍ່ໄປນີ້ຄືຂໍ້ເທັດຈິງກ່ຽວ ກັບການທາຣຸນແລະ ໃຊ້ຄວາມຮຸນແຮງຕໍ່ ເດັກນ້ອຍຊຶ່ງທ່ານຄວນຈະຮູ້:

- ການທາຣຸນເດັກນ້ອຍສ່ວນຫລາຍ ແມ່ນກະທຳໂດຍສະມາຊິກໃນຄອບຄົວ.
- ພວກເດັກນ້ອຍໄດ້ຮັບຄວາມທໍຣະມານເມື່ອ ມີຜູ້ໃດຜູ້ນຶ່ງໃນເຮືອນຖືກທາຣຸນ.

ພວກເດັກນ້ອຍທີ່ໄດ້ເຫັນ ການທາຣຸນຫລືຄວາມຮຸນແຮງ ຈະມີບັນຫາຢູ່ໃນໂຮງຮຽນ.

ພວກເຂົາເຈົ້າ ສ່ວນຫລາຍຈະໄດ້ຮັບຄວາມກົດດັນ ແລະມີຄວາມວິຕົກກັງວົນ.

FIRST 5 CALIFORNIA

ປ້ອງກັນຄອບຄົວຂອງ ທ່ານຈາກ ເຫດການທາຣຸນ

ປ້ອງກັນຄອບຄົວຂອງທ່ານ ຈາກເຫດການທາຣຸນ

ທ່ານສາມາດມີເຮືອນທີ່ປອດພັຍ

ຖ້າມີເຫດການທາຣຸນເກີດຂຶ້ນພາຍໃນເຮືອນຂອງ ທ່ານ, ຢ່າເກັບໄວ້ເປັນຄວາມລັບ. ຈົ່ງເວົ້າກັບຜູ້ໃດຜູ້ນຶ່ງ. ໃຫ້ຊອກຫາຄວາມຊ່ວຍເຫລືອ.

ໃຫ້ສັງເກດອາການຕ່າງໆເຫລົ່ານີ້. ມັນອາດຈະເປັນອາການຂອງເດັກນ້ອຍທີ່ ຖືກທາຣຸນ.

ພວກເດັກນ້ອຍທີ່ຖືກທາຣຸນມາ ອາດຈະມີອາການດັ່ງຕໍ່ໄປນີ້
ເປັນບາງຄັ້ງບາງຄາວ:

- ມີບາດແຜເຫລື້ມ ຫລືແຜເປັນ ທີ່ບໍ່ສາມາດຈະອະທິບາຍໄດ້.
- ຫລັບນອນຍາກ.
- ມີຄວາມເຈັບປວດ, ບວມ ຫລືມີເລືອດໃນປາກຫລືທີ່ອະວັຍວະສືບພັນ ຊຶ່ງບໍ່ມີໃຜຈະອະທິບາຍໄດ້.

ພວກເດັກນ້ອຍ ຜູ້ທີ່ຖືກທາຣຸນ ອາດຈະມີອາການດັ່ງຕໍ່ໄປນີ້ ຄືກັນ:

- ມີຄວາມຢ້ານກົວຫລາຍ, ເສົ້າໂສກ, ຫລືທິດຫູ່ຢ່າງບໍ່ມີເຫດຜົນ.
- ມັກຫາເຮື່ອງ ຫລືມັກບຸກລຸກຜູ້ອື່ນ.
- ລອກລຽນການປະພຶດຫາງເຜດຂອງຜູ້ໃຫຍ່.

ບໍ່ສົນໃຈນຳໂຮງຮຽນ ຫລື ບໍ່ສົນໃຈໃນສິ່ງທີ່ພວກເຂົາເຄີຍສົນໃຈ ມາກ່ອນ.

ຈະເຮັດແນວໃດເມື່ອທ່ານສົງໃສว່າ ເດັກຖືກທາຣຸນ:

- ສິດສອນລູກຂອງທ່ານໃຫ້ມ້າງບອກທ່ານ ຖ້າວ່າມີເຫດການແນວບໍ່ດີເກີດຂຶ້ນກັບພວກເຂົາ.
- ຊອກຂໍຄຳແນະນຳໃນທັນທີທັນໃດໂລດ.
- ທ່ານສາມາດໂທຣະສັບຂໍຄວາມຊ່ວຍເຫລືອ ຫລືຄຳແນະນຳຕາມໝາຍເລກໂທຣະສັບທີ່ໄດ້ຈັດລຽງໄວ້ ຢູ່ທາງດ້ານຫລັງນີ້.

ຊຸດປ້ອງກັນການທາຣຸນ ແລະ ຄວາມຮຸນແຮງ

**ຖ້າທ່ານ ທ່ານ ທ່ານ